**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

--------------------------

ແຂວງຫຼວງພະບາງ

ເມືອງຫຼວງພະບາງ

ບ້ານ ສັງຄະໂລກ — ວັນທີ, 08 ມິຖຸນາ 2017.

ເບີໂທຕິດຕໍ່: 020 22133456

# ໃບຄຳຮ້ອງຂໍລົບລ້າງ

**ຮຽນ:** ທ່ານ ປະທານ ສານປະຊາຊົນ ຂັ້ນລົບລ້າງ, ທີ່ເຄົາລົບຢ່າງສູງ!

**ເລື່ອງ:** ຂໍສະເໜີ ເພີ່ມເຕີມກ່ຽວກັບການຂໍລົບລ້າງ ຄຳພິພາກສາ.

- **ອີງຕາມ:** ແນວທາງລຶບລ້າງ ຄວາມທຸກຍາກ ຂອງປະຊາຊົນ, ທີ່ພັກ-ລັດຖະບານແຫ່ງ ສປປ ລາວ ວາງອອກ.
- **ອີງຕາມ:** ກົດໝາຍ, ວ່າດ້ວຍສິດ ແລະ ພັນທະຂອງພົນລະເມືອງລາວ ຕໍ່ໜ້າກົດໝາຍ ແຫ່ງ ສປປ ລາວ.
- **ອີງຕາມ:** ສັນຍາຊື້-ຂາຍ ດິນ, ເລກທີ 01 / ສຄລ,ທີ່ບ້ານ ສັງຄະໂລກ, ວັນທີ 08/ 01 /2012 ລະຫ່ວາງ ນາງ ບຸນທັນ ແລະ ທ້າວ ເພັດຈຳພອນ ຊຸນດາລາ.
- **ອີງຕາມ:** ໃບຢັ້ງຢືນ ເລກທີ 246/ຫຊສ,ຫຼບ, ລົງວັນທີ 11 /04/2015 ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ເມືອງຫຼວງພະບາງ.
- **ອີງຕາມ:** ໃບຢັ້ງຢືນ ເລກທີ 205 / ພຊສ, ຫຼວງພະບາງ, ວັນທີ 02 FEB 2016 ຂອງພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ແຂວງຫຼວງພະບາງ, ກ່ຽວກັບເນື້ອທີ່ດິນ ຂອງທ້າວເພັດຈຳພອນ ຊຸນດາລາ-ທ້າວ ແສງວິງຈິດ ຢາງວິໄລ ທີ່ດິນຕັ້ງຢູ່ສັງຄະໂລກ ເມືອງ ຫຼວງພະບາງ ແຂວງ ຫຼວງພະບາງ.
- **ອີງຕາມ:** ເນື້ອໃນ ຄຳຕັດສິນ ຄະນະສານແພ່ງຂັ້ນຕົ້ນ ຂອງສານປະຊາຊົນແຂວງຫຼວງພະບາງ, ສະບັບ ເລກທີ 012 /ຂຕ.ພ, ລົງວັນທີ 14 ພະຈິກ 2016.

ຂ້າພະເຈົ້າ; ນາງ ບຸນທັນ ລັກປະສິດ, ອາຍຸ **59** ປີ, ຊົນຊາດລາວ, ສັນຊາດ ລາວ, ຊົນເຜົ່າ ລາວລຸ່ມ, ສາສະໜາພຸດ. ປັດຈຸບັນ ຢູ່ບ້ານ ສັງຄະໂລກ, ໜ່ວຍ **05**, ເຮືອນ ເລກທີ **090** ເມືອງ ແລະ ແຂວງ ຫຼວງພະບາງ, ໃນຖານະເປັນ ( ຈຳເລີຍ ), ຜູ້ທີ່ຖືກອັບປະໂຫຍດ ຈາກການຂາຍດິນ, ຂໍຖືເປັນກຽດ, ຮຽນມາຍັງທ່ານ ປະທານສານ ປະຊາຊົນສູງສຸດ; ມີຈຸດປະສົງ: ເພື່ອສະເໜີໃຫ້ສານພິຈາລະນາ ຕື່ມວ່າ: ລາຄາຂອງການຊື້-ຂາຍທີ່ດິນໃນບໍລິເວນນັ້ນຜ່ານມາບໍ່ມີຜູ້ໃດຂາຍ ໃນລາຄາ **595** ບາດ/ຕາແມັດ ຄືໂຈດໄດ້ຕີລາຄາໃຫ້ແກ່ຂ້າພະເຈົ້າ, ແຕ່ການຊື້-ຂາຍທີ່ດິນຕົວຈິງ ໃນເວລານັ້ນ ແລະ ຢູ່ໃນຂົງເຂດບ້ານສັງຄະໂລກນັ້ນແມ່ນຊື້-ຂາຍຕົວຈິງມີລາຄາຕ່ຳສຸດ **1,481** ບາດ ຫຼື **1, 639** ບາດ /ຕາແມັດ ຂຶ້ນໄປ ເຊັ່ນ:

1. ທີ່ດິນ ທີ່ຂ້າພະເຈົ້າໄດ້ຊື້ກັບ ນາງ ພິດສະໄໝ ຈັນທະວົງ - ທ້າວ ຄຳຟອງ ຈັນທະວົງ ປະຈຸບັນຢູ່ບ້ານຈູມຄ້ອງ , ເມືອງຫຼວງພະບາງ, ແຂວງຫຼວງພະບາງ ຕາມສັນຍາຊື້-ຂາຍ ເລກທີ 03/ສຄລ, ທີ່ບ້ານສັງຄະໂລກ ວັນທີ16/01/2012, ເບີໂທ: 77776304. ແມ່ນໄດ້ຊື້ ໃນລາຄາ **610,000** ບາດ, ຕໍ່ເນື້ອທີ່ດິນ **372** ຕາແມັດ, ກໍສະແດງວ່າ: ທີ່ດິນຕອນນີ້ ມີມູນຄ່າ 1 ຕາແມັດ ເທົ່າກັບ **1,639** ບາດ, ຄວາມຈິງທີ່ດິນດັ່ງກ່າວທີ່ຂ້າພະເຈົ້າຊື້ນີ້ ຍັງບໍ່ໄດ້ຕິດແຄມທາງໃຫຍ່ ຄືກັບທີ່ດິນທີ່ຂ້າພະເຈົ້າຂາຍໃຫ້ທ້າວ ເພັດຈຳພອນ ຂຸນດາລາ (ໂຈດ)ນີ້ເລີຍ, ເປັນຫຍັງໂຈດ ຈຶ່ງຕີລາຄາທີ່ດິນ ຂອງ ຂ້າພະເຈົ້າໃນ ລາຄາ **595** ບາດ / ຕາແມັດ ໂດຍພາລະການເຊັ່ນນີ້ ຜູ້ກ່ຽວມີເຈດຕະນາຊ້ອນໄວ້ ໃນເບື້ອງເລິກແນວໃດ?

2. ທີ່ດິນຂອງທ່ານ ບຸນທັນ + ນາງ ວັນດີ, ອາຊີບຄ້າຂາຍ, ປັດຈຸບັນຢູ່ບ້ານ ວັດແສນ, ໜ່ວຍ 02 ເມືອງ ແລະ ແຂວງຫຼວງພະບາງ, (ຜູ້ຊື້)ສິດນຳໃຊ້ທີ່ດິນ ແລະ ເຮືອນ ແລະ ທ່ານ ທຸມພັນ + ນາງ ວັນໄຊ, ອາຊີບຄ້າຂາຍ, ປັດຈຸບັນຢູ່ບ້ານສັງຄະໂລກ, ໜ່ວຍ 12 ເມືອງ ແລະ ແຂວງຫຼວງພະບາງ ເປັນ(ຜູ້ຂາຍ) ສິດນຳໃຊ້ທີ່ດິນ 135 ຕາແມັດ ແລະ ເຮືອນ ໃນມູນຄ່າ 100,000,000 ກີບ.

3. ທີ່ດິນຕ່າງໆທີ່ເພິ່ນຕິດປ້າຍຂາຍຢູ່ເຂດສັງຄະໂລກກໍຍັງມີຢ່າງຫຼວງຫຼາຍເຊັ່ນ: ປ້າຍຕິດວ່າ: ຕ້ອງການຂາຍທີ່ດິນ (Land for Safe) ເບີຕິດຕໍ່ 020 29303689, 58551229 ໄດ້ໂທພົວພັນຜູ້ກ່ຽວແລ້ວດິນຕອນດັ່ງກ່າວນີ້ ແມ່ນຂາຍໄດ້ໃນລາຄາ 3400 ບາດ / ຕາແມັດ.

4. ທີ່ດິນຂອງ ທ່ານ ເພັດຈຳພອນ(ໂຈດ) ຕອນດຽວທີ່ຊີ້ນຳ ຂ້າພະເຈົ້າ (ຈຳເລີຍ) ຢູ່ທີ່ ບ້ານ ສັງຄະໂລກ, ເມືອງ ຫຼວງພະບາງ, ແຂວງຫຼວງພະບາງ, ພີ່ນ້ອງໄປພົບເຫັນຕິດປ້າຍຂາຍຢູ່ ກໍເລີຍໂທພົວພັນ ຕາມເບີທີ່ເພິ່ນຂຽນຕິດ ຢູ່ປ້າຍປະກາດຂາຍ ທ່ານ ເພັດຈຳພອນ ເພິ່ນໄດ້ແຈ້ງ ທາງໂທລະສັບວ່າ: ຂາຍໃນ ລາຄາ **100** ໂດລາ / ຕາແມັດ, ແຕ່ປ້າຍ ບໍ່ໄດ້ບອກລາຄາ, ບັນຫານີ້ຜູ້ກ່ຽວຄິດແນວໃດ ຈຶ່ງມາຕີລາຄາໃຫ້ຂ້າພະເຈົ້າຂາຍໃນມູນຄ່າ 500 ບາດ / ຕາແມັດ ແລະ ມາຕິດປ້າຍຂາຍພັດເວົ້າໃນມູນຄ່າ **100** ໂດລາ/ ຕາແມັດ.( ນີ້ແມ່ນພຶດຕິກຳມີເຫງື່ອນງຳ ສະແດງເຖິງການສໍ້ໂກງຂອງຜູ້ມີເງິນ).

ເພື່ອຄວາມຖືກຕ້ອງເປັນທຳ ແລະ ມີຄວາມຍຸຕິທຳ ແນໃສ່ຍົກສູງ ຄຸນນະພາບ ຂອງກົດໝາຍ ແຫ່ງ ສປປ ລາວ ເພື່ອຮັບໃຊ້ໜ້າທີ່ການເມືອງຂອງລັດຖະບານ ກໍຄືປະຊາຊົນລາວນັບມື້ ໄດ້ຮັບຄວາມນິຍົມ-ຊົມຊອບນັ້ນ. ໃບຕາດິນທີ່ມີການພິມຜິດພາດນັ້ນກໍ່ແມ່ນອົງການທີ່ດິນເປັນຜູ້ອອກໃຫ້ ຊຶ່ງໃນຈຸດນີ້ໝາຍຄວາມວ່າວິຊາການຂອງອົງການທີ່ກ່ຽວຂ້ອງບໍ່ມີການກວດກາ, ເຊິ່ງໃນການເຮັດ ສັນຍາຊື້-ຂາຍ ດິນ, ເລກທີ 01 / ສຄລ,ທີ່ບ້ານ ສັງຄະໂລກ, ວັນທີ 08/ 01 /2012 ລະຫ່ວາງ ນາງ ບຸນທັນ ແລະ ທ້າວ ເພັດຈຳພອນ ຂຸນດາລາ ນີ້ ຂ້າພະເຈົ້າ (ຈຳເລີຍ) ແມ່ນໄດ້ອີງຕາມໃບຕາດິນແຂບຄານີ້ ເປັນການລະບຸເນື້ອທີ່ດິນ ຊຶ່ງຝ່າຍຜູ້ຊື້ ແລະ ຝ່າຍຜູ້ຂາຍກໍ່ໄດ້ເຊື່ອໝັ້ນ ອົງການທີ່ດິນວ່າຖືກຕ້ອງ. ຖ້າອົງການທີ່ຮັບຜິດຊອບອອກໃບຕາດິນນີ້ມີການກວດກາລະອຽດພິມຖືກ ຂ້າພະເຈົ້າ (ຈຳເລີຍ) ກໍ່ບໍ່ຕົກຢູ່ໃນສະພາບທີ່ໄດ້ຮັບຄວາມອັບປະໂຫຍດຄືເຊັ່ນນີ້, ເພາະການ ຊື້-ຂາຍ ດິນ ຂ້າພະເຈົ້າເອງ ກໍ່ໄດ້ປະຕິບັດຕາມພັນທະຕ່າງໆ, ເສຍອາກອນການຊື້-ຂາຍ ທີ່ດິນ ຢ່າງຄົບຖ້ວນ ອົງການທີ່ກ່ຽວຂ້ອງຈຶ່ງໄດ້ອອກໃບຕາດິນໃໝ່ມາໃຫ້ຝ່າຍ (ໂຈດ). ຂ້າພະເຈົ້າ ນາງ ບຸນທັນ (ຈຳເລີຍ) ເປັນປະຊາຊົນລາວຄົນໜຶ່ງ ຂໍຮຽນສະເໜີມາຍັງທ່ານ ປະທານສານ ປະຊາຊົນສູງສຸດ ເພື່ອຂໍໃຫ້ເພິ່ນພິຈາລະນາຕາມຄວາມເປັນຈິງແດ່ວ່າຈຸດທີ່ຜິດພາດນັ້ນມັນເກີດມາຈາກໃສແທ້ແລ້ວເປັນຫຍັງຈຶ່ງມາລົງທີ່ຝ່າຍ ຂ້າພະເຈົ້າ ນາງ ບຸນທັນ (ຈຳເລີຍ) ພຽງແຕ່ຄົນດຽວຄືດັ່ງທີ່ທາງສານຂັ້ນຕົ້ນ, ສານປະຊາຊົນພາກເໜືອ ຄະນະສານແພ່ງ ຂັ້ນອຸທອນ ທີ່ໄດ້ລົງຄຳຕັດສິນ, ຄຳພິພາກສາ ນັ້ນ ແລະ ຂໍສະເໜີໃຫ້ທ່ານ ປະທານສານ ປະຊາຊົນສູງສຸດ ຈົ່ງພິຈາລະນາມີ 3 ບັນຫາຄື:

1. ຂໍລືບລ້າງທັງໝົດຄຳພິພາກສາ ຂອງສານປະຊາຊົນພາກເໜືອ, ຄະນະສານແພ່ງ ຂັ້ນອຸທອນ ສະບັບ ເລກທີ 005 / ອທ.ພ, ລົງວັນທີ 31 ມີນາ 2017.

2. ຂໍລືບລ້າງທັງໝົດ ຄຳສັ່ງອາຍັດຊັບສິນຂອງສານຂັ້ນຕົ້ນ ຕໍ່ກັບການດຳລົງຊີວິດຂອງຄອບຄົວຂ້າພະເຈົ້າ, ຊຶ່ງທັງໝົດຂອງການຊື້-ຂາຍດິນຕອນນີ້, ຂ້າພະເຈົ້າ ກໍບໍ່ມີບັນຫາໃດໆ ທີ່ຈະກະທຳຄວາມຜິດ ຈົນເຖິງຂັ້ນ ອາຍັດຊັບ, ເປັນຫຍັງສານຂັ້ນຕົ້ນຈຶ່ງທາລຸນຂ້າພະເຈົ້າດ້ວຍຮູບການເຊັ່ນນີ້.

3. ຂໍໃຫ້ຄະນະສານຂັ້ນລົບລ້າງ ລົງກວດກາຄວາມເປັນຈິງໃນການຊື້-ຂາຍ ທີ່ດິນຢູ່ບໍລິເວນນີ້ດ້ວຍ.

- ໝາຍເຫດ: ມີເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງຕິດມາພ້ອມນີ້.

ດັ່ງນັ້ນ; ຈຶ່ງຮຽນມາຍັງທ່ານ ປະທານສານ ປະຊາຊົນສູງສຸດ ໄດ້ພິຈາລະນາ ແລະ ໃຫ້ຄວາມເປັນທຳດ້ວຍ.

ຮຽນມາດ້ວຍຄວາມເຄົາລົບນັບຖືຢ່າງສູງ!

**ລາຍເຊັນເຈົ້າ ຂອງຄຳຮ້ອງ**

ບ່ອນສົ່ງ: ສານປະຊາຊົນສູງສຸດ 1 ສະບັບ
ສຳເນົາ 1 ສະບັບ